ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ 0637 /ກງ

ນະຄອນຫຼວງວຽງຈັນ, ວັນທີ 01 ມີນາ 2023

# ແຈ້ງການ

**ເຖິງ:** ອົງການຈັດຕັ້ງຂອງລັດ, ອົງການຈັດຕັ້ງສາກົນ, ບັນດາຫົວໜ່ວຍທຸລະກິດ, ບັນດາບຸກຄົນ, ນິຕິບຸກຄົນ ໃນຂອບເຂດທົ່ວປະເທດ.

**ເລື່ອງ:** ການຈັດຕັ້ງປະຕິບັດ ສາລະບານສິນຄ້າລະບົບເອກະພາບອາຊຽນ ຣຸ່ນປີ 2022 (AHTN 2022).

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 81/ສພຊ, ລົງວັນທີ 29 ມິຖຸນາ 2020;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 91/ນຍ, ລົງວັນທີ 16 ມັງກອນ 2023 ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ສາລະບານສິນຄ້າລະບົບເອກະພາບຂອງອາຊຽນ ລຸ້ນປີ 2022 (AHTN 2022);
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 600/ນຍ, ລົງວັນທີ 14 ຕຸລາ 2021 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ;
- ອີງຕາມ ໜັງສືລາຍງານຂອງກົມພາສີ ສະບັບເລກທີ 00542/ກພສ, ລົງວັນທີ 24 ມັງກອນ 2023.

ເພື່ອຮັບປະກັນການຈັດຕັ້ງຜັນຂະຫຍາຍເນື້ອໃນຂອງ ດຳລັດວ່າດ້ວຍການປະກາດໃຊ້ສາລະບານສິນຄ້າລະບົບເອກະພາບອາຊຽນ ຣຸ່ນປີ 2022 (ASEAN Harmonized Tarif Nomenclature-AHTN 2022) ໃຫ້ສອດຄ່ອງກັບລະບຽບການສາກົນ ແນ່ໃສ່ເປັນການອຳນວຍຄວາມສະດວກທາງດ້ານການຄ້າ ດ້ວຍການຮັບປະກັນຄວາມຖືກຕ້ອງ ຊັດເຈນ ແລະ ເປັນເອກະພາບກັນໃນການຈັດລະຫັດສິນຄ້າ, ເຄື່ອງຂອງໃນຂອບເຂດທົ່ວປະເທດ ແລະ ສອດຄ່ອງກັບຫຼັກການສາກົນ.

## ກະຊວງການເງິນ ອອກແຈ້ງການ ດັ່ງນີ້:

1. ສາລະບານສິນຄ້າລະບົບເອກະພາບ ອາຊຽນ ຣຸ່ນປີ 2022 (AHTN 2022) ເພື່ອປ່ຽນແທນສາລະບານສິນຄ້າລະບົບເອກະພາບ ຂອງອາຊຽນ ຣຸ່ນປີ 2017 (AHTN 2017) ທີ່ປະກາດໃຊ້ໂດຍ ດຳລັດ ສະບັບເລກທີ 122/ນຍ, ລົງວັນທີ 03 ເມສາ 2018;
2. ສາລະບານສິນຄ້າລະບົບເອກະພາບອາຊຽນ ຣຸ່ນປີ 2022 (AHTN 2022) ປະກອບມີ 21 ພາກ, 97 ໝວດ, ມີທັງໝົດ 11.414 ລະຫັດ;
3. ມອບໃຫ້ກົມພາສີ ອອກບົດແນະນຳລະອຽດ ກ່ຽວກັບ ການຈັດຕັ້ງປະຕິບັດ ສາລະບານສິນຄ້າລະບົບເອກະພາບ ອາຊຽນ ຣຸ່ນປີ 2022 (AHTN 2022) ພ້ອມທັງ ເຜີຍແຜ່ ແລະ ຈັດຝຶກອົບຮົມໃຫ້ເຈົ້າໜ້າທີ່ພາສີ, ຜູ້ປະກອບການ ແລະ ພາກສ່ວນທີ່ກ່ຽວຂ້ອງ ຮັບຊາບ ແລະ ເຂົ້າໃຈ;
4. ສາລະບານສິນຄ້າລະບົບເອກະພາບອາຊຽນ ຣຸ່ນປີ 2022 (AHTN 2022) ມີຜົນບັງຄັບໃຊ້ນັບແຕ່ວັນທີ 01 ມີນາ 2023 ເປັນຕົ້ນໄປ;
5. ແຈ້ງການ ສະບັບນີ້ໃຊ້ປ່ຽນແທນແຈ້ງການ ສະບັບເລກທີ 0394/ກງ, ລົງວັນທີ 07 ກຸມພາ 2023.

ດັ່ງນັ້ນ, ແຈ້ງການມາເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

**ລັດຖະມົນຕີ**

ສັນຕິພາບ ພົມວິຫານ